ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຄັງເງິນແຫ່ງຊາດ

ເລກທີ 0586 /ຄງຊ

ນະຄອນຫຼວງວຽງຈັນ, ວັນທີ 23 ກຸມພາ 2021

# ສັນຍາ

# ວ່າດ້ວຍ ການໃຫ້ບໍລິການ ຮັບຝາກເງິນ, ຖອນເງິນ ແລະ ໂອນເງິນ ຢູ່ບັນດາເມືອງທີ່ບໍ່ມີໜ່ວຍບໍລິການຂອງທະນາຄານທຸລະກິດ

**ລະຫວ່າງ**

ຄັງເງິນແຫ່ງຊາດ, ກະຊວງການເງິນ ສຳນັກງານຕັ້ງຢູ່ ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ ໝາຍເລກ 021 415950, ໂທລະສານ 021 412412 ໃນສັນຍານີ້ ເອີ້ນວ່າ **"ຄງຊ"**

ແລະ

ທະນາຄານນະໂຍບາຍ, ສຳນັກງານຕັ້ງຢູ່ ຖະໜົນໄກສອນພົມວິຫານ, ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ ໝາຍເລກ: 021 264470-21, ໂທລະສານ 021 216421 ໃນສັນຍານີ້ ເອີ້ນວ່າ **"ທນບ"**

- ອີງຕາມ ດຳລັດວ່າດ້ວຍຄັງເງິນແຫ່ງຊາດ ສະບັບເລກທີ 259/ນຍ, ລົງວັນທີ 01 ມິຖຸນາ 2010;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາການໃຫ້ບໍລິການຂອງທະນາຄານ ນະໂຍບາຍ ໃນການຮັບຝາກເງິນ ແລະ ການບໍລິການມອບພັນທະຕ່າງໆເຂົ້າເປັນລາຍຮັບງົບປະມານແຫ່ງລັດ ຢູ່ບັນດາເມືອງທີ່ບໍ່ມີໜ່ວຍບໍລິການ ຂອງທະນາຄານທຸລະກິດ ສະບັບເລກທີ 3041/ກງ, ລົງວັນທີ 13 ພະຈິກ 2020.

ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານບໍລິການ ລາຍຮັບ-ລາຍຈ່າຍ ຜ່ານລະບົບທະນາຄານ ໃຫ້ມີປະສິດທິຜົນ; ຄູ່ສັນຍາທັງສອງຝ່າຍໄດ້ຕົກລົງເຫັນດີເປັນເອກະພາບກັນ ເຮັດສັນຍາ ວ່າດ້ວຍ ການໃຫ້ບໍລິການຮັບຝາກເງິນ, ຖອນເງິນ ແລະ ໂອນເງິນ ຢູ່ບັນດາເມືອງທີ່ບໍ່ມີໜ່ວຍບໍລິການຂອງທະນາຄານທຸລະກິດ ໂດຍມີເນື້ອໃນລະອຽດດັ່ງລຸ່ມນີ້:

**ມາດຕາ 1: ຈຸດປະສົງ**

ສັນຍາສະບັບນີ້ສ້າງຂຶ້ນເພື່ອກຳນົດລະບຽບການ, ກົນໄກ, ຂັ້ນຕອນ, ວິທີການ ແລະ ການຄິດໄລ່ຄ່າທຳນຽມໃນການໃຫ້ບໍລິການທີ່ຕິດພັນກັບການດຳເນີນທຸລະກຳທາງການເງິນ ລະຫວ່າງ ຄັງເງິນແຫ່ງຊາດປະຈຳເມືອງ ແລະ ໜ່ວຍບໍລິການທະນາຄານນະໂຍບາຍ.

**ມາດຕາ 2: ຄຳນິຍາມ ແລະ ການແປຄວາມໝາຍ**

ອະທິບາຍຄຳສັບໃນສັນຍາ ສະບັບນີ້:

1. ບັນຊີເງິນຝາກກະແສລາຍວັນ: ໝາຍເຖິງ ເງິນຝາກທີ່ບໍ່ມີກຳນົດ, ບໍ່ມີດອກເບ້ຍ, ໃຊ້ແຊັກແທນເງິນເພື່ອອຳນວຍຄວາມສະດວກໃນການຊຳລະສະສາງສິນຄ້າ ແລະ ອື່ນໆ;
2. ຄງຊ: ໝາຍເຖິງ ຄັງເງິນແຫ່ງຊາດ;
3. ທນບ: ໝາຍເຖິງ ທະນາຄານນະໂຍບາຍ;
4. GL: General Ledger ໝາຍເຖິງ ບັນຊີແຍກປະເພດ;

5. RTGS: Real Time Gross Settlement ໝາຍເຖິງ ລະບົບການຊໍາລະແບບທັນທີ;
6. ACH: Automatic Clearing House ໝາຍເຖິງ ລະບົບຊໍາລະທຸລະກໍາຍ່ອຍ.

**ມາດຕາ 3: ການບໍລິການ**

- ທະນາຄານນະໂຍບາຍ ໃຫ້ບໍລິການ ຮັບຝາກ, ຖອນເງິນ ແລະ ໂອນເງິນ ພາຍໃນ ແລະ ພາຍນອກ ໃຫ້ ຄັງເງິນແຫ່ງຊາດປະຈໍາເມືອງ ຢູ່ບັນດາເມືອງທີ່ບໍ່ມີໜ່ວຍບໍລິການຂອງທະນາຄານທຸລະກິດ;
- ທະນາຄານນະໂຍບາຍ ເປີດບໍລິການຮັບຝາກ-ໂອນເງິນ ໃຫ້ຄັງເງິນແຫ່ງຊາດປະຈໍາເມືອງ ໃນວັນລັດຖະການ (ວັນຈັນ-ວັນສຸກ), ເວລາ 8:30 ໂມງ - 15:00 ໂມງ.

**ມາດຕາ 4: ກົນໄກການຈັດຕັ້ງປະຕິບັດ**

**4.1 ຮູບແບບການໃຫ້ບໍລິການ**

- ທະນາຄານນະໂຍບາຍ ກໍານົດເອົາບັນຊີເງິນຝາກກະແສລາຍວັນ ດ້ວຍຮູບແບບເປັນບັນຊີ GL ໂດຍນໍາໃຊ້ ຮູບແບບການລົງທຸລະກໍາທົ່ວໄປເພື່ອຮອງຮັບການບໍລິການໃຫ້ຄັງເງິນແຫ່ງຊາດປະຈໍາເມືອງເຂົ້າໃນການ ຕິດຕາມ ແລະ ກວດກາການເຄື່ອນໄຫວທຸລະກໍາ ຮັບຝາກ-ຖອນ ແລະ ໂອນເງິນ;
- ທະນາຄານນະໂຍບາຍ ໃຫ້ບໍລິການຮັບຝາກສະເພາະສະກຸນເງິນກີບເທົ່ານັ້ນ ແລະ ບັນຊີດັ່ງກ່າວຈະບໍ່ໄດ້ ຄິດໄລ່ອັດຕາດອກເບ້ຍ.

**4.2 ການເປີດ - ການປິດ ບັນຊີ**

- ຄັງເງິນແຫ່ງຊາດປະຈໍາເມືອງ ຕ້ອງໄດ້ປະກອບເອກະສານຕາມແບບຟອມຂອງ ທະນາຄານນະໂຍບາຍ ກໍານົດໄວ້ໃນແຕ່ລະໄລຍະເພື່ອຂໍເປີດບັນຊີ ເປັນຕົ້ນ: ຕ້ອງໄດ້ຂຽນໃບສະເໜີ ພ້ອມທັງວາງລາຍເຊັນຂອງ ເຈົ້າຂອງບັນຊີ ແລະ ກໍານົດເງື່ອນໄຂໃນການອະນຸມັດສັ່ງຈ່າຍໃຫ້ຖືກຕ້ອງ;
- ຄັງເງິນແຫ່ງຊາດປະຈໍາເມືອງ ທີ່ມີຈຸດປະສົງຈະປິດບັນຊີເງິນຝາກຂອງຕົນທີ່ເປີດໄວ້ຢູ່ ທະນາຄານ ນະໂຍບາຍ ຕ້ອງໄດ້ປະກອບເອກະສານຕາມແບບຟອມຂອງ ທະນາຄານນະໂຍບາຍ ກໍານົດໄວ້ໃນແຕ່ລະ ໄລຍະ ເປັນຕົ້ນ: ຂຽນໃບສະເໜີຂໍປິດບັນຊີເງິນຝາກ ແລະ ປະຕິບັດຕາມລະບຽບການອື່ນໆ ຂອງ ທະນາຄານນະໂຍບາຍ.

**4.3 ການມອບເງິນ**

- ການມອບເງິນເຂົ້າບັນຊີເງິນຝາກ ຄັງເງິນແຫ່ງຊາດປະຈໍາເມືອງ ຕ້ອງປະກອບຂໍ້ມູນ ຕາມແບບພິມຂອງ ທະນາຄານນະໂຍບາຍ ກໍານົດອອກແຕ່ລະໄລຍະໃຫ້ຄົບຖ້ວນ, ພາຍຫຼັງສໍາເລັດແລ້ວຈະສົ່ງໃບມອບເງິນ ສະບັບທີ 2 ສົ່ງຄືນໃຫ້ຄັງເງິນແຫ່ງຊາດປະຈໍາເມືອງ, ສ່ວນສະບັບຕົ້ນແມ່ນ ທະນາຄານນະໂຍບາຍ ເກັບ ຮັກສາໄວ້ຕາມລະບຽບຫຼັກການກໍານົດໄວ້;
- ການມອບເງິນເຂົ້າບັນຊີຢູ່ ທະນາຄານນະໂຍບາຍ ແຕ່ລະຄັ້ງແມ່ນບໍ່ຈໍາກັດວົງເງິນ, ໂດຍແມ່ນພະນັກງານ ຂອງຄັງເງິນແຫ່ງຊາດປະຈໍາເມືອງ ເປັນຜູ້ນໍາເງິນສົດໄປມອບຢູ່ຫ້ອງການໜ່ວຍບໍລິການທະນາຄານ ນະໂຍບາຍ.

**4.4 ການຖອນເງິນ**

- ຄັງເງິນແຫ່ງຊາດປະຈໍາເມືອງ ຕ້ອງສ້າງໃບສະເໜີຂໍເບີກຖອນເງິນສົດຈາກບັນຊີຂອງຕົນ ຄັດຕິດກັບແບບ ພິມຂອງ ທະນາຄານນະໂຍບາຍ ທີ່ໄດ້ກໍານົດອອກແຕ່ລະໄລຍະ ໂດຍລະບຸເນື້ອໃນຂອງການເບີກຖອນ ຢ່າງຈະແຈ້ງ ເປັນຕົ້ນແມ່ນ ຊື່ ແລະ ນາມສະກຸນ, ເລກບັດປະຈໍາຕົວ ຂອງນາຍຄັງ (ຜູ້ທີ່ຈະຖອນເງິນ)

ຫລື ຜູ້ທີ່ໄດ້ຮັບມອບສິດໃນການຖອນເງິນ, ຈຳນວນເງິນທີ່ເປັນຕົວເລກ ແລະ ຕົວໜັງສື, ຊື່ ແລະ ເລກບັນຊີເງິນຝາກທີ່ຕ້ອງການຖອນພ້ອມທັງລົງລາຍເຊັນຜູ້ມີສິດເຊັນສັ່ງຈ່າຍເງິນຈາກບັນຊີດັ່ງກ່າວໃຫ້ຖືກຕ້ອງທຸກຄັ້ງ;

- ທະນາຄານນະໂຍບາຍ ສຳນັກງານໃຫຍ່ ສາມາດເບີກຈ່າຍເງິນອອກຈາກບັນຊີ ໃນວົງເງິນບໍ່ເກີນ 1.000.000.000 ກີບ ( ໜຶ່ງຕື້ກີບຖ້ວນ ) ຕໍ່ບັນຊີ ຕໍ່ 01 ມື້;
- ທະນາຄານນະໂຍບາຍ ຂັ້ນສາຂາ ສາມາດເບີກຈ່າຍເງິນອອກຈາກບັນຊີ ໃນວົງເງິນບໍ່ເກີນ 800.000.000 ກີບ ( ແປດຮ້ອຍລ້ານກີບຖ້ວນ ) ຕໍ່ບັນຊີ ຕໍ່ 01 ມື້;
- ທະນາຄານ ນະໂຍບາຍ ຂັ້ນໜ່ວຍບໍລິການ ສາມາດເບີກຈ່າຍເງິນອອກຈາກບັນຊີ ໃນວົງເງິນບໍ່ເກີນ 100.000.000 ກີບ ( ໜຶ່ງຮ້ອຍລ້ານກີບຖ້ວນ ) ຕໍ່ບັນຊີ ຕໍ່ 01 ມື້;

ກໍລະນີມີຄວາມຕ້ອງການຖອນເງິນສົດເປັນຈຳນວນຫຼາຍເກີນ 100.000.000 ກີບຂຶ້ນໄປ ຕ້ອງໄດ້ແຈ້ງໃຫ້ ທະນາຄານນະໂຍບາຍ ຊາບກ່ອນລ່ວງໜ້າ 02 ວັນລັດຖະການ, ເພື່ອກະກຽມສະພາບຄ່ອງໃຫ້ພຽງພໍກັບຄວາມຕ້ອງການນຳໃຊ້ເງິນໃນແຕ່ລະຄັ້ງ.

**4.5 ການພິມບັນຊີສຳຮອງ**

- ທະນາຄານນະໂຍບາຍ ຕ້ອງພິມບັນຊີສຳຮອງ ເປັນປະຈຳວັນ ເພື່ອສະໜອງໃຫ້ ຄັງເງິນແຫ່ງຊາດປະຈຳເມືອງ ບໍ່ໃຫ້ກາຍເວລາ 10 ໂມງຂອງມື້ຖັດໄປ;
- ກໍລະນີທີ່ມີຄວາມຕ້ອງການພິມບັນຊີສຳຮອງ ຍ້ອນຫຼັງ ເປັນເດືອນ, ງວດ, ແລະ ປີ ຄັງເງິນແຫ່ງຊາດປະຈຳເມືອງ ຕ້ອງປະກອບໃບສະເໜີເຖິງ ທະນາຄານນະໂຍບາຍ ໃນແຕ່ລະຄັ້ງ.

**ມາດຕາ 5: ການກຳນົດອັດຕາຄ່າທຳນຽມບໍລິການ**

**5.1 ທະນາຄານນະໂຍບາຍ ຍົກເວັ້ນຄ່າທຳນຽມບໍລິການ ດັ່ງນີ້:**

- ຍົກເວັ້ນຄ່າທຳນຽມເປີດບັນຊີໃໝ່, ປິດບັນຊີ ແລະ ແບບພິມການຖອນເງິນສົດ ຂອງຄັງເງິນເມືອງໃນແຕ່ລະຄັ້ງ;
- ຍົກເວັ້ນຄ່າທຳນຽມທີ່ຄັງເງິນແຫ່ງຊາດປະຈຳເມືອງ ມອບເງິນເຂົ້າບັນຊີ ແລະ ຖອນເງິນສົດອອກຈາກບັນຊີ ແຕ່ລະຄັ້ງ;
- ຍົກເວັ້ນຄ່າທຳນຽມທີ່ຕິດພັນກັບການໃຫ້ບໍລິການພາຍໃນ ແລະ ໂອນພາຍໃນຂອງ ທະນາຄານນະໂຍບາຍ ທັງໝົດ;
- ຍົກເວັ້ນຄ່າທຳນຽມການໂອນເງິນມາຈາກຕ່າງທະນາຄານ (ຂາເຂົ້າ) ຜ່ານຊ່ອງທາງ RTGS ແລະ ACH;
- ຍົກເວັ້ນການເກັບຄ່າທຳນຽມພິມບັນຊີສຳຮອງປະຈຳວັນ (ບໍ່ໃຫ້ກາຍມື້ຖັດໄປ) ແລະ ປະຈຳເດືອນ (ບໍ່ໃຫ້ກາຍເດືອນຖັດໄປ).

**5.2 ທະນາຄານນະໂຍບາຍ ເກັບຄ່າທຳນຽມບໍລິການ ດັ່ງນີ້:**

- ເກັບຄ່າທຳນຽມກັບ ຄັງເງິນແຫ່ງຊາດປະຈຳເມືອງ ກໍລະນີມີຄ່າທຳນຽມບໍລິການທີ່ຕິດພັນກັບພາກສ່ວນພາຍນອກ ເປັນຕົ້ນ: ຄ່າທຳນຽມໂອນເງິນ (ຂາອອກ) ຂອງຄັງເງິນເມືອງ ຜ່ານລະບົບ RTGS, ACH ແລະ ລາຍການອື່ນໆ ຕາມຈຳນວນຄ່າທຳນຽມທີ່ພາກສ່ວນພາຍນອກເກັບນຳ ທະນາຄານນະໂຍບາຍ (ຖ້າມີ);
- ກໍລະນີມອບເງິນສົດເພື່ອໂອນໄປທະນາຄານອື່ນຕ້ອງເສຍຄ່າທຳນຽມຕາມ ທະນາຄານນະໂຍບາຍ ກຳນົດອອກແຕ່ລະໄລຍະ;

- ເກັບຄ່າທຳນຽມໃນກໍລະນີທີ່ມີການສະເໜີຂໍກວດຄືນສຳເນົາເອກະສານຍ້ອນຫຼັງ ຕາມລະບຽບການຂອງ ທະນາຄານນະໂຍບາຍ ກຳນົດ;
- ເກັບຄ່າທຳນຽມໃນການຮັກສາບັນຊີເປັນປະຈຳເດືອນຕາມລະບຽບຂອງ ທະນາຄານນະໂຍບາຍ ກຳນົດ ອອກແຕ່ລະໄລຍະ.

**ມາດຕາ 6: ກຳນົດເວລາຂອງສັນຍາວ່າດ້ວຍການເປັນຕົວແທນ**

- ສັນຍາສະບັບນີ້ມີກຳນົດເວລາ 01 ປີ, ເລີ່ມແຕ່ວັນທີ 01 ມັງກອນ 2021 ເຖິງ ວັນທີ 31 ທັນວາ 2021 ແລະ ຈະຕໍ່ອາຍຸສັນຍາຮ່ວມກັນເປັນປີຕໍ່ປີ;
- ກ່ອນໝົດກຳນົດສັນຍາກໍລະນີມີຝ່າຍໃດຝ່າຍໜຶ່ງຕ້ອງການປັບປຸງເນື້ອໃນໃດໜຶ່ງຂອງສັນຍາ ຝ່າຍດັ່ງກ່າວ ຕ້ອງແຈ້ງໃຫ້ອີກຝ່າຍຮັບຊາບກ່ອນໝົດກຳນົດສັນຍາ 30 ວັນ ກໍລະນີບໍ່ມີຝ່າຍໃດແຈ້ງເຈດຈຳນົງດັ່ງກ່າວ ຈະຖືວ່າສັນຍາສະບັບນີ້ມີອາຍຸການນຳໃຊ້ຕໍ່ໄປອີກໂດຍອັດຕະໂນມັດ.

**ມາດຕາ 7: ສິດ ແລະ ພັນທະຂອງ ທະນາຄານນະໂຍບາຍ**

- ມີໜ້າທີ່ໃຫ້ບໍລິການຮັບຝາກ, ຖອນ ແລະ ໂອນເງິນໃຫ້ຄັງເງິນແຫ່ງຊາດປະຈຳເມືອງ ດ້ວຍຄວາມຮັບຜິດຊອບສູງ;
- ມີໜ້າທີ່ພິມບັນຊີສຳຮອງ ເປັນປະຈຳວັນ, ປະຈຳເດືອນ ເພື່ອສະໜອງໃຫ້ ຄັງເງິນແຫ່ງຊາດປະຈຳເມືອງ ບໍ່ໃຫ້ກາຍເວລາ 10:00 ໂມງ ໃນວັນລັດຖະການຂອງມື້ຖັດໄປ;
- ມີໜ້າທີ່ສະໜອງສະພາບຄ່ອງໃຫ້ພຽງພໍກັບຄວາມຕ້ອງການນຳໃຊ້ເງິນຂອງຄັງເງິນແຫ່ງຊາດປະຈຳເມືອງໃນແຕ່ລະຄັ້ງ ໂດຍອີງຕາມລະບຽບການຂອງ ທະນາຄານນະໂຍບາຍ ທີ່ກຳນົດໃນແຕ່ລະໄລຍະ;
- ມີໜ້າທີ່ສະໜອງຂໍ້ມູນກ່ຽວກັບ ການເຄື່ອນໄຫວບັນຊີເງິນຝາກ ຂອງຄັງເງິນປະຈຳເມືອງ ທີ່ເປີດບັນຊີຢູ່ໜ່ວຍບໍລິການ ຂອງ ທະນາຄານນະໂຍບາຍ ໃນຂອບເຂດທົ່ວປະເທດໃຫ້ຄັງເງິນແຫ່ງຊາດ ສູນກາງຊາບ ຕາມຕາຕະລາງແບບຟອມ ລາຍງານຂອງຄັງເງິນແຫ່ງຊາດ ໂດຍໃຫ້ສົ່ງເປັນຟາຍເອັກເຊວ ຜ່ານຊ່ອງທາງເອເລັກໂຕຣນິກ ຫຼື ອີເມວ ເປັນປະຈຳວັນ ຊ້າຊຸດບໍ່ໃຫ້ກາຍ 10:00 ໂມງໃນວັນລັດຖະການຂອງມື້ຖັດໄປ;
- ໃນກໍລະນີ ເກີດມີການປ່ຽນແປງດ້ານບໍລິການ ທະນາຄານນະໂຍບາຍ ຕ້ອງແຈ້ງໃຫ້ຄັງເງິນແຫ່ງຊາດສູນກາງຊາບຢ່າງໜ້ອຍ 03 ວັນລັດຖະການ.

**ມາດຕາ 8: ສິດ ແລະ ພັນທະຂອງ ຄັງເງິນແຫ່ງຊາດ**

- ຄັງເງິນແຫ່ງຊາດ ຕ້ອງຮັກສາຍອດເຫຼືອເງິນຕໍ່າສຸດໃນບັນຊີຂອງແຕ່ລະບັນຊີຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງ ທະນາຄານນະໂຍບາຍ ວາງອອກໃນແຕ່ລະໄລຍະ;
- ຄັງເງິນແຫ່ງຊາດ ເປັນເຈົ້າການໃນການປະຕິບັດຕາມເງື່ອນໄຂຂອງ ທະນາຄານນະໂຍບາຍ ໃນການ ເປີດ-ປິດ ບັນຊີເງິນຝາກ, ບັນດາລະບຽບ ແລະ ຂໍ້ກຳນົດຕ່າງໆ ທີ່ ທະນາຄານນະໂຍບາຍ ກຳນົດອອກແຕ່ລະໄລຍະ;
- ຄັງເງິນແຫ່ງຊາດ ຕ້ອງປະສານສົມທົບ ກັບ ທະນາຄານນະໂຍບາຍ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອຮັບປະກັນໃຫ້ໄດ້ປະສິດທິຜົນສູງ;

**ມາດຕາ 9: ການດັດແປງເນື້ອໃນສັນຍາ**

ທຸກເນື້ອໃນ ແລະ ເງື່ອນໄຂທີ່ລະບຸໄວ້ ໃນສັນຍາສະບັບນີ້ ບໍ່ມີການປ່ຽນແປງ ຈາກຝ່າຍໃດໜຶ່ງ ໂດຍພາລະການ, ເວັ້ນເສຍແຕ່ທັງສອງຝ່າຍໄດ້ປຶກສາຫາລື ແລະ ເຫັນດີເປັນເອກະພາບແກ້ໄຂ, ເພີ່ມເຕີມໂດຍພື້ນຖານຕົກລົງເຫັນດີເຮັດບົດບັນທຶກ-ສັນຍາສະບັບໃໝ່.

ການດັດແກ້ບາງເນື້ອໃນ ຫຼື ທຸກເນື້ອໃນຂອງສັນຍາສະບັບນີ້ ທັງສອງຝ່າຍຕ້ອງໄດ້ຄົ້ນຄວ້າປຶກສາຫາລື ຮ່ວມກັນ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ແລະ ຕ້ອງໄດ້ຮັບການຕົກລົງເຫັນດີຂອງຄູ່ສັນຍາທັງສອງຝ່າຍຢ່າງເປັນລາຍລັກອັກສອນ ແລະ ມີການລົງລາຍເຊັນຮັບຮອງຂອງຄູ່ສັນຍາທັງສອງຝ່າຍຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 10: ການຍົກເລີກສັນຍາ**

ຄູ່ສັນຍາຝ່າຍໃດຝ່າຍໜຶ່ງສາມາດຍົກເລີກສັນຍາໄດ້ ຖ້າຫາກເຫັນວ່າຝ່າຍໃດຝ່າຍໜຶ່ງມີການລະເມີດເງື່ອນໄຂຂໍ້ໃດຂໍ້ໜຶ່ງ ຫຼື ທັງໝົດ ທີ່ໄດ້ລະບຸໄວ້ໃນສັນຍາສະບັບນີ້ມີສິດຂໍຍົກເລີກໄດ້ ແຕ່ຕ້ອງໄດ້ມີການແຈ້ງເຈດຈຳນົງຢ່າງເປັນລາຍລັກອັກສອນໃຫ້ຄູ່ສັນຍາອີກຝ່າຍຮັບຊາບລ່ວງໜ້າຢ່າງໜ້ອຍ 07 ວັນລັດຖະການ.

**ມາດຕາ 11: ການແກ້ໄຂຂໍ້ຂັດແຍ່ງ**

ຄູ່ສັນຍາທັງສອງຝ່າຍເຫັນດີໃຫ້ການຮ່ວມມືເຊິ່ງກັນ ແລະ ກັນ, ປຶກສາຫາລືເປັນປົກກະຕິ, ສະຫຼຸບຕີລາຄາຈຸດດີ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດສັນຍາຕົວຈິງໃຫ້ມີປະສິດທິຜົນ ພ້ອມກັນຊອກຫາວິທີແກ້ໄຂບັນຫາຄົງຄ້າງຢ່າງທັນການເພື່ອໃຫ້ການບໍລິການມີຄວາມສະດວກ, ວ່ອງໄວ ແລະ ທັນສະໄໝ.

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ໃນການຈັດຕັ້ງປະຕິບັດສັນຍາສະບັບນີ້ຄູ່ສັນຍາທັງສອງຝ່າຍຕ້ອງປຶກສາຫາລືກັນແກ້ໄຂດ້ວຍສັນຕິວິທີ, ກໍລະນີບໍ່ສາມາດຕົກລົງກັນໄດ້ການແກ້ໄຂດັ່ງກ່າວຕ້ອງດຳເນີນການຕາມຂະບວນການຍຸຕິທຳຂອງ ສປປ ລາວ.

**ມາດຕາ 12: ການຈັດຕັ້ງປະຕິບັດ**

ນັບແຕ່ມື້ເຊັນສັນຍາຮ່ວມກັນທັງສອງຝ່າຍແມ່ນຈະໄດ້ທົດລອງຈັດຕັ້ງປະຕິບັດ ຢູ່ 10 ເມືອງ ຄື: ເມືອງຫົວເມືອງ, ເມືອງ ກວັນ ແຂວງຫົວພັນ, ເມືອງ ພູກູດ, ເມືອງ ຜາໄຊ ແຂວງ ຊຽງຂວາງ, ເມືອງ ສະໜາມໄຊ ແຂວງອັດຕະປື, ເມືອງ ສຳພັນ ແຂວງ ຜົ້ງສາລີ, ເມືອງ ເມິງ ແຂວງບໍ່ແກ້ວ, ເມືອງ ແມດ ແຂວງວຽງຈັນ, ເມືອງລ້ອງແຈ້ງ, ເມືອງ ຮົ່ມ ແຂວງໄຊສົມບູນ ຫຼັງຈາກນັ້ນ ຈຶ່ງຈະໄດ້ປະເມີນຜົນການຈັດຕັ້ງປະຕິບັດເພື່ອລາຍງານໃຫ້ຄະນະນຳກະຊວງການເງິນຊາບ ແລະ ຈະໄດ້ສືບຕໍ່ຜັນຂະຫຍາຍໄປສູ່ບັນດາ 24 ເມືອງ ທີ່ຍັງເຫຼືອ.

**ມາດຕາ 13: ຜົນສັກສິດ ແລະ ການສິ້ນສຸດຂອງສັນຍາ**

ສັນຍາສະບັບນີ້ມີ 13 ມາດຕາ, 05 ໜ້າ ແລະ ໄດ້ສ້າງຂຶ້ນເປັນ 02 ສະບັບຊຶ່ງມີເນື້ອໃນອັນດຽວກັນມີຄວາມໝາຍຄືກັນທາງດ້ານກົດໝາຍ, ໂດຍມອບໃຫ້ ຄັງເງິນແຫ່ງຊາດ 01 ສະບັບ ແລະ ທະນາຄານນະໂຍບາຍຮັກສາໄວ້ 01 ສະບັບ; ສັນຍາສະບັບນີ້ ເຮັດຂຶ້ນດ້ວຍຄວາມສະໝັກໃຈ ບໍ່ໄດ້ຖືກບີບບັງຄັບຈາກ ຝ່າຍໃດຝ່າຍໜຶ່ງແຕ່ຢ່າງໃດ, ທັງສອງຝ່າຍເຫັນດີເປັນເອກະພາບກັນແລ້ວ ຈຶ່ງໄດ້ລົງລາຍເຊັນໄວ້ ເປັນຫຼັກຖານຕາມລະບຽບ ແລະ ກົດໝາຍບ້ານເມືອງ.

ສັນຍາສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ຮ່ວມກັນຢ່າງຖືກຕ້ອງເປັນຕົ້ນໄປ ແລະ ຈະສິ້ນສຸດລົງພາຍຫຼັງ ແຕ່ລະຝ່າຍໄດ້ປະຕິບັດສັນຍາສະບັບນີ້ ຕໍ່ກັນຢ່າງຄົບຖ້ວນ.

| | |
|---|---|
| **ຫົວໜ້າຄັງເງິນແຫ່ງຊາດ** | **ຜູ້ອຳນວຍການ**<br>**ທະນາຄານ ນະໂຍບາຍ** |
| ກະຊວງການເງິນ ຄັງເງິນແຫ່ງຊາດ | ທະນາຄານ ແຫ່ງ ສປປ ລາວ<br>ທະນາຄານນະໂຍບາຍ<br>NAYOBY BANK (NBB)<br>ນະຄອນຫລວງວຽງຈັນ |
| **ນ.ວັນພອນ ພົມມະສອນ** | **ວຸດທິ ເລື່ອນວິໄລວົງ** |